# ຄູ່ມືການລ້ຽງເປັດ



ຂຽນໂດຍ: ອຈ. ປອ. ມາລາວັນ ຈິດຕະວົງ

ກວດແກ້ໂດຍ: ອຈ. ຄຳ ພົມມະຈັນ

ມີນາ 2022

# ຄູ່ມືການລ້ຽງເປັດ

| | |
|---|---|
| ຊື່ໂມດູນ | ການລ້ຽງເປັດ |
| ຊື່ອົງປະກອບການຮຽນ | - ປະຫວັດຄວາມເປັນມາ ແລະ ບັນຫາຂອງການລ້ຽງເປັດ<br>- ການຄັດເລືອກສະຖານທີ່ ແລະ ໂຮງເຮືອນລ້ຽງເປັດ<br>- ການຄັດເລືອກເປັດ ແລະ ການລ້ຽງເປັດໄລຍະຕ່າງໆ<br>- ພະຍາດ ແລະ ການຮັກສາສຸຂະພາບເປັດ<br>- ການຟັກໄຂ່ ແລະ ການອະນຸບານເປັດນ້ອຍ<br>- ການນໍາໃຊ້ນໍ້າໝັກຊີວະພາບ ແລະ ວິທີການປະສົມອາຫານໃຫ້ເປັດ |
| ອົງກອນອະນຸມັດ | ກະຊວງສຶກສາທິການ ແລະ ກິລາ |


**ຂຽນໂດຍ: ອຈ. ປອ. ມາລາວັນ ຈິດຕະວົງ**

**ກວດແກ້ໂດຍ: ອຈ. ຄໍາ ພົມມະຈັນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມອາຊີວະສຶກສາ

ເລກທີ 528/ອສ

ນະຄອນຫຼວງວຽງຈັນ, ວັນທີ 13 ມີນາ 2022

## ຂໍ້ຕົກລົງ

### ວ່າດ້ວຍການ ຮັບຮອງຄູ່ມື ຝຶກອົບຮົມໄລຍະສັ້ນ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ການສະເໜີຂອງຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ສະບັບເລກທີ 093/ຫກ ລົງວັນທີ່ 01 ກຸມພາ 2022.

### ຫົວໜ້າກົມອາຊີວະສຶກສາ ຕົກລົງ:

ມາດຕາ 01 ອະນຸມັດໃຫ້ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ນຳໃຊ້ຄູ່ມືຝຶກອົບຮົມໄລຍະສັ້ນ ແລະ ປຶ້ມຄູ່ມືຄູການຈັດຕັ້ງປະຕິບັດການຮຽນ-ການສອນ ໃນ 15 ສາຂາອາຊີບ ແລະ 03ໂມດູນໝວດຄວາມຮູ້ທົ່ວໄປ ຄື: 1)ອາຊີບລ້ຽງໝູ 2)ອາຊີບລ້ຽງກົບ 3)ອາຊີບລ້ຽງໄກ່ 4)ອາຊີບລ້ຽງງົວທອມ 5)ອາຊີບລ້ຽງປານິນ 6) ອາຊີບລ້ຽງປາດຸກ 7)ອາຊີບລ້ຽງເປັດ 8)ອາຊີບລ້ຽງແບ້ 9)ອາຊີບປູກຜັກກະລໍາປີ 10)ອາຊີບປູກຜັກກາດຊອມ 11)ອາຊີບປູກເຫັດນາງຟ້າ 12)ອາຊີບປູກເຫັດເຟືອງ 13)ອາຊີບປູກເຫັດຂອນຂາວ 14)ອາຊີບການຕໍ່າຫູກຍອມສີທຳມະຊາດ(ລະດັບຕົ້ນ) 15)ອາຊີບການຕໍ່າຫູກຍອມສີທຳມະຊາດ(ລະດັບກາງ) 16)ການວາງແຜນທຸລະກິດຂະໜາດນ້ອຍ ແລະ ກາງ 17)ການສື່ສານສຳລັບຜູ້ປະກອບການ ແລະ 18)ທັກສະການສື່ສານສຳລັບຄູຝຶກ;

ມາດຕາ 02 ໃຫ້ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນຝຶກອົບຮົມຕາມຫຼັກສູດຝຶກອົບຮົມດັ່ງກ່າວ ໃນແຕ່ລະຂັ້ນຕອນ ແລະ ປະເມີນຜົນແຕ່ລະໄລຍະ ພ້ອມທັງອອກໃບຢັ້ງຢືນໃຫ້ຜູ້ທີ່ຜ່ານການຝຶກອົບຮົມຕາມລະບຽບຫຼັກການ;

ມາດຕາ 03 ໃຫ້ຫ້ອງການຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ່າງໆ ຈົ່ງພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ຂອງໃຜລາວ;

ມາດຕາ 04 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມ

ໜູພັນ ອຸດສາ
Nouphanh OUTSA

<u>ບ່ອນສົ່ງ:</u>

| | |
|---|---|
| - ພະແນກຂອງກົມອາຊີວະສຶກສາ | 01 ສະບັບ |
| - ຫ້ອງການຊາວໜຸ່ມປະຊາຊົນປະຕິວັດລາວ | 01 ສະບັບ |
| - ສະຖານອາຊີວະສຶກສາ ແຕ່ງລະ | 01 ສະບັບ |
| - ພາກສ່ວນກ່ຽວຂ້ອງ ບ່ອນລະ | 01 ສະບັບ |
| - ເກັບມ້ຽນ | 02 ສະບັບ |

# ສາລະບານ

ໜ້າ

*ບົດນຳ*....... **6**

*ຊື່ອົງປະກອບການຮຽນທີ 1: ປະຫວັດຄວາມເປັນມາ ແລະ ບັນຫາຂອງການລ້ຽງເປັດ*....... **7**

1.1 ຄວາມສຳຄັນຂອງການລ້ຽງເປັດ....... 7

1.2 ບັນຫາຫຼັກຂອງການລ້ຽງເປັດມີຫຍັງແດ່?....... 7

*ຊື່ອົງປະກອບການຮຽນທີ 2: ການຄັດເລືອກສະຖານທີ່ ແລະ ໂຮງເຮືອນລ້ຽງເປັດ*....... **9**

2.1. ການຄັດເລືອກສະຖານທີ່ບ່ອນລ້ຽງທີ່ເໝາະສົມ....... 9

2.2.ລັກສະນະຂອງຄອກເປັດທີ່ດີ....... 10

*2.3 ຮູບແບບຂອງຄອກ*....... **10**

2.3. ຄອກສຳລັບເປັດນ້ອຍ....... 13

2.4. ຄອກສຳລັບເປັດລຸ້ນ....... 14

2.5. ຄອກສຳລັບເປັດໄຂ່....... 15

*ຊື່ອົງປະກອບການຮຽນທີ 3: ການຄັດເລືອກເປັດ ແລະ ການລ້ຽງໄລຍະຕ່າງໆ*....... **16**

3.1. ການຄັດເລືອກເປັດນ້ອຍ....... 16

3.2. ການລ້ຽງເປັດອາຍຸ 0-3 ອາທິດ....... 17

3.3. ການລ້ຽງເປັດອາຍຸ 3-8 ອາທິດ....... 20

3.4 ການລ້ຽງເປັດອາຍຸ 8-12 ອາທິດ....... 20

*ຊື່ອົງປະກອບການຮຽນທີ 4: ພະຍາດ ແລະ ການປ້ອງກັນພະຍາດ*....... **21**

4.1 ການຂ້າເຊື້ອພະຍາດພາຍໃນຄອກເປັດ....... 21

4.2 ພະຍາດທີ່ມັກເກີດຂຶ້ນກັບເປັດ....... 21

1) ພະຍາດອະຫິວາເປັດ....... 22

2) ພະຍາດລຳໄສ້ອັກເສບຂອງເປັດ....... 22

3) ພະຍາດກະດູກອ່ອນຂອງເປັດ....... 23

4.3 ອຸປະກອນ ແລະ ເຄື່ອງມືໃນການສັກວັກຊີນ....... 23

*ຊື່ອົງປະກອບການຮຽນທີ 5: ການຟັກໄຂ່ ແລະ ການອະນຸບານເປັດນ້ອຍ*....... **24**

5.1 ການຟັກໄຂ່....... 24

5.2. ການອະນຸບານເປັດນ້ອຍ......................................................................................................24
5.4. ອຸປະກອນສຳລັບໃຫ້ອາຫານ ແລະ ນ້ຳເປັດ ......................................................................25

*ຊື່ອີງປະກອບການຮຽນທີ 6: ການນຳໃຊ້ນ້ຳໝັກຊີວະພາບ ແລະ ວິທີປະສົມອາຫານໃຫ້ເປັດ*............................ **26**

6.1. ການນຳໃຊ້ນ້ຳໝັກຊີວະພາບຈາກສະໝູນໄພຊ່ວຍໃຫ້ເປັດແຂງແຮງ......................................................26
6.2. ການນຳໃຊ້ນ້ຳໝັກຊີວະພາບຂັບໄລ່ແມງໄມ້ ແລະ ດັບກິ່ນຄອກເປັດ ......................................................27
6.4 ການໄລ່ລຽງເສດຖະກິດການລ້ຽງເປັດ ..........................................................................27

# ບົດນຳ

ປື້ມຄູ່ມື ການລ້ຽງເປັດສະບັບນີ້ ໄດ້ຂຽນ ແລະ ຮວບຮວມ ເພື່ອແກ້ໄຂບັນຫາທີ່ຊາວກະສິກອນພົບພໍ້ຢູ່ເປັນຕົ້ນແມ່ນເລື່ອງເປັດຈະເລີນເຕີບໂຕຊ້າ, ເປັດບໍ່ແຂງແຮງ ແລະ ຕາຍຕາຍຍ້ອນພະຍາດ, ຜູ້ຂຽນເຊື່ອວ່າ ປື້ມຄູ່ມືນີ້ຈະສາມາດຕອບສະໜອງໄດ້ ທາງດ້ານວິຊາການໃຫ້ແກ່ຊາວກະສິກອນ ແລະ ຜູ້ລ້ຽງເປັດຕົວຈິງ ຊຶ່ງສາມາດນຳໃຊ້ຄວາມຮູ້ນີ້ໄປໃຊ້ໃນທາງປະຕິບັດໄດ້ ຜູ້ຂຽນໄດ້ຮວມຮວມ ແລະ ຄັດຈ້ອນ ເອົາຂໍ້ມູນທາງດ້ານວິຊາການຈາກປື້ມຄູ່ມືຫຼາຍໆບ່ອນ ແລະ ຈາກປະສົບການຕົວຈິງທີ່ເຄີຍປະຕິບັດມາຈາກພາກສະໜາມ.

ສຸດທ້າຍນີ້ ຂໍສະແດງຄວາມຂອບໃຈຢ່າງສູງ ມາຍັງຄະນະກະເສດສາດ ເອື້ອອຳນວຍຄວາມສະດວກໃນການຂຽນປື້ມ ແລະ ພິເສດຂໍສະແດງຄວາມຂອບໃຈຢ່າງສູງມາຍັງສູນທັກສະທີ່ໜັບສະໜູນທຶນຮອນໃນການຂຽນປື້ມຄັ້ງນີ້.


ທ່ານສາມາດສົ່ງຄຳຄິດເຫັນ ຫຼື ຕິດຕໍ່ຜູ້ຂຽນໄດ້ທີ່:

ຄະນະກະເສດສາດ, ມະຫາວິທະຍາໄລແຫ່ງຊາດ

ເບີມືຖື ຫຼື ເບີວອດແອັບ: 020 22070940

Email: malavanc@yahoo.com; m.chittavong@nuol.edu.la

ມັງກອນ, 2022

ອຈ. ປອ. ມາລາວັນ ຈິດຕະວົງ

| ອົງປະກອບການຮຽນ | ໜ້າ: 06 |
|---|---|
| **ຊື່ອົງປະກອບການຮຽນທີ 1: ປະຫວັດຄວາມເປັນມາ ແລະ ບັນຫາຂອງການລ້ຽງເປັດ** | |
| ຊື່ໂມດູນ: ການລ້ຽງເປັດ | ລະຫັດ |
| ຊື່ອາຊີບ: ລ້ຽງສັດ | |

**ຈຸດປະສົງ**

ພາຍຫຼັງສຳເລັດອົງປະກອບການຮຽນນີ້ ຮຽນສາມາດ ອະທິບາຍຄວາມສຳຄັນ ແລະ ບັຣຫາຫຼັກຂອງການລ້ຽງເປັດໄດ້ຢ່າງຖືກຕ້ອງຕາມຄູ່ມືລ້ຽງເປັດ.

**ພາກສະເໜີ**

ເນື້ອໃນບົດຮຽນນີ້ປະກອບດ້ວຍ 2 ຂໍ້ໃຫຍ່ຄື ຄວາມສຳຄັນຂອງການລ້ຽງເປັດ ແລະ ບັນຫາຫຼັກຂອງການລ້ຽງເປັດມີຫຍັງແດ່?

## 1.1 ຄວາມສຳຄັນຂອງການລ້ຽງເປັດ

ການລ້ຽງເປັດພັນຊີ້ນແມ່ນຄວາມສຳຄັນຫຼາຍ ເນື່ອງຈາກວ່າເປັດເປັນສັດຂະໜາດນ້ອຍສາມາດລ້ຽງໄດ້ຈຳນວນຫຼາຍໆໂຕ, ຕ້ອງການພື້ນທີ່ພຽງເລັກນ້ອຍ, ໃຫ້ ຜົນຕອບແທນໄວ, ລ້ຽງງ່າຍໃຫຍ່ໄວ, ນຳໃຊ້ສິ່ງເສດເຫຼືອຈາກການຜະລິດກະສິກຳ, ສິ່ງເສດເຫຼືອ ຈາກຄົວເຮືອນ ແລະ ພືດຜັກຕ່າງໆສາມາດເປັນອາຫານເປັດໄດ້, ສາມາດຄືນກຳໄລໃຫ້ຜູ້ລ້ຽງເປັດໄວ ເພາະວ່າ ລ້ຽງໃນໄລຍະເວລາ 3-4 ເດືອນ ກໍສາມາດຈຳໜ່າຍອອກໄດ້. ສ້າງລາຍຮັບ ທາງດ້ານເສດຖະກິດໃຫ້ແກ່ຄອບຄົວ, ຊີ້ນເປັດຍັງເປັນແຫຼ່ງອາຫານທີ່ໃຫ້ທາດໂປຼຕີນທີ່ສຳຄັນ ສາມາດນຳມາປຸງແຕ່ງອາຫານໄດ້ຫຼາຍປະເພດ. ນອກນັ້ນ ຂີ້ເປັດຍັງສາມາດນຳໃຊ້ເປັນຝຸ່ນຢ່າງດີ ໃນການປູກພືດຜັກ ແລະ ສ່ວນໜຶ່ງສາມາດນຳໄປເປັນອາຫານໃຫ້ປາກິນ ໄດ້ອີກດ້ວຍ.

## 1.2 ບັນຫາຫຼັກຂອງການລ້ຽງເປັດມີຫຍັງແດ່?

- ເປັດໃຫຍ່ຊ້າຍ້ອນກິນອາຫານບໍ່ຄົບໝູ່ ແລະ ບໍ່ພຽງພໍຕາມຄວາມຕ້ອງການຕາມຊ່ວງອາຍຸ ຜູ້ລ້ຽງບາງຄົນເກືອແຕ່ຮຳ, ສາລີບົດ, ເຂົ້າປຽນ ແລະ ໃບພືດທີ່ມີຕາມລະດູການ.
- ເປັດໃຫ້ຜົນຜະລິດໜ້ອຍ ຍ້ອນຂາດສານອາຫານເຊັ່ນ: ໂປຼຕີນ, ວິຕາມິນ ແລະ ແຮ່ທາດ, ຂາດການຈັດການທີ່ດີ ເຊັ່ນ: ຄອກເປື້ອນ, ຮາງນ້ຳ ແລະ ຮາງອາຫານເປື້ອນ ແລະ ບໍ່ມີນ້ຳໃຫ້ເປັດກິນຕະຫຼອດເວລາ
- ຕາຍຍ້ອນພະຍາດລະບາດໂດຍສະເພາະແມ່ນພະຍາດອະຫິວາເປັດ ແລະ ພະຍາດອື່ນໆ

- ເປັດນ້ອຍຕາຍຫຼາຍໃນຊ່ວງອະນຸບານ ຍ້ອນຂາດການຈັດການທີ່ດີເຊັ່ນ: ປ່ອຍເປັດນ້ອຍຕາມກາງບ້ານ ຫຼື ປ່ອຍໄປນຳແມ່ຂອງມັນເຮັດໃຫ້ເປັດນ້ອຍບໍ່ໄດ້ກິນອາຫານທີ່ດີ ແລະ ນ້ຳເປື້ອນ; ເປັດນ້ອຍຕາຍຍ້ອນພະຍາດ ເຊັ່ນ: ພະຍາດຖອກທ້ອງ, ພະຍາດຂີ້ປູນ, ຂີ້ຂຽວ ແລະ ຂີ້ປົນເລືອດ ແລະ ອື່ນໆ.







➢ ຖ້າຜູ້ລ້ຽງເປັດຢາກແກ້ໄຂບັນຫາທີ່ກ່າວມາຂ້າງເທິງໄດ້ ແມ່ນຕ້ອງປະຕິບັດຕາມຫຼັກການທີ່ຖືກຕ້ອງ ດັ່ງທີ່ໄດ້ແນະນຳໃນບົດທີ 2-4.

| ອົງປະກອບການຮຽນ | ໜ້າ: 8 |
|---|---|
| **ຊື່ອົງປະກອບການຮຽນທີ 2: ການຄັດເລືອກສະຖານທີ່ ແລະ ໂຮງເຮືອນລ້ຽງເປັດ** | |
| ຊື່ໂມດູນ: ການລ້ຽງເປັດ | ລະຫັດ |
| ຊື່ອາຊີບ: ລ້ຽງສັດ | |

**ຈຸດປະສົງ**

ພາຍຫຼັງສຳເລັດອົງປະກອບການຮຽນນີ້ ທ່ານຈະສາມາດ ອະທິບາຍຫຼັກການການຄັດເລືອກສະຖານທີ່ ແລະ ໂຮງເຮືອນລ້ຽງເປັດໄດ້ຢ່າງຖືກຕ້ອງ ແລະ ສາມາດປະຕິບັດຕົວຈິງໄດ້.

**ພາກສະເໜີ**

ເນື້ອໃນບົດຮຽນນີ້ປະກອບດ້ວຍ 6 ຂໍ້ຄື: ການຄັດເລືອກສະຖານທີ່ບ່ອນລ້ຽງທີ່ເໝາະສົມ, ລັກສະນະຂອງຄອກເປັດທີ່ດີ, ຮູບແບບຄອກ, ຄອກສຳລັບເປັດນ້ອຍ, ຄອກສຳລັບເປັດລຸ້ນ, ຄອກສຳລັບເປັດໄຂ່.

## 2.1. ການຄັດເລືອກສະຖານທີ່ບ່ອນລ້ຽງທີ່ເໝາະສົມ

ເປັດສາມາດລ້ຽງໄດ້ໃນທຸກສະຖານທີ່ບໍ່ວ່າຈະເປັນພື້ນທີ່ມີແຫຼ່ງນ້ຳ ຫຼື ເປັນໂນນກໍສາມາດລ້ຽງໄດ້. ແຕ່ດີທີ່ສຸດຄວນເລືອກບ່ອນທີ່ສະອາດ, ບໍ່ມີນ້ຳຖ້ວມຂັງ, ຫ່າງໄກເຮືອນຢ່າງໜ້ອຍ 10 ແມັດ ຖ້າເປັນຟາມຕ້ອງຫ່າງໄກຈາກຊຸມຊົນ ຢ່າງໜ້ອຍ 5 ກິໂລແມັດ, ວິທີການຄັດເລືອກສະຖານທີ່ມີດັ່ງນີ້:

ຕ້ອງເປັນພື້ນທີ່ສູງ - ນ້ຳບໍ່ຖ້ວມຂັງໃນເວລາຝົນຕົກ ຫຼື ເປັນພື້ນທີ່ດິນຊາຍ ມີການຖ່າຍເທນ້ຳສະດວກສະບາຍ ຖິ້ມສິ່ງປົນເປື້ອນໄດ້ງ່າຍ ສະດວກສະບາຍໃນການຮັກສາຄວາມສະອາດ.

ຕ້ອງເປັນບ່ອນທີ່ເຊື່ອຖືໄດ້ວ່າບໍ່ເຄີຍເກີດພະຍາດມາກ່ອນ - ຫຼື ຫ່າງຈາກຟາມຄົນອື່ນ ເພື່ອ ປ້ອງກັນພະຍາດລະບາດ ໃນກໍລະນີທີ່ຮຸນແຮງ.

ເປັນບ່ອນທີ່ມີເສັ້ນທາງຄົມມະນາຄົມເຂົ້າເຖິງ - ສາມາດໄປມາໄດ້ສະດວກສະບາຍ ໄດ້ ທຸກລະດູການ, ມີນ້ຳໄຟຟ້າສະດວກດີ ແລະ ບໍ່ຫ່າງໄກຈາກຕະຫຼາດ.

ຄວນຢູ່ຫ່າງຈາກຊຸມຊົນພໍສົມຄວນ - ເພື່ອບໍ່ໃຫ້ມີກິ່ນເໝັນລົບກວນສຸຂະພາບ ແລະ ພະຍາດອາດຕິດໃສ່ຄົນໄດ້.

## 2.2. ລັກສະນະຂອງຄອກເປັດທີ່ດີ

- ຄອກເປັດຄວນກໍສ້າງດ້ວຍວັດສະດຸທີ່ຫາໄດ້ງ່າຍໃນທ້ອງຖິ່ນ ຂະໜາດຂອງຄອກແມ່ນ 2x2 m ບັນຈຸເປັນໃຫຍ່ໄດ້ 12 ໂຕ. ຄອກເປັດຄວນແບ່ງເປັນ 2 ສ່ວນດັ່ງນີ້:

- ເດີ່ນນອກຊາຍຄາເປັນບ່ອນທີ່ໃຫ້ນໍ້າ ແລະ ອາຫານ.
- ສ່ວນດ້ານໃນຊາຍຄາຄວນແບ່ງເປັນຫ້ອງ ໂດຍໃຊ້ໄມ້ດົ້ວແອ້ມສູງ 80 cm ແລະ ຄອກຕ້ອງສູງຈາກລະດັບໜ້າດິນປະມານ 20 cm.

-ຄວນໃຊ້ວັດຖຸຮອງພື້ນເຊັ່ນ: ແກບ ຫຼື ຂີ້ເລື່ອຍ ເພື່ອດູດຊຶມນໍ້າ ແລະ ຂີ້ເປັດ ເພື່ອໃຫ້ ຄອກແຫ້ງຢູ່ຕະຫຼອດເວລາ.

- ຝາຂອງຄອກອາດຈະໃຊ້ ກະແຕະໄມ້ເຮ້ຍ, ຕາໜ່າງຢາງ ຫຼື ເຫຼັກກໍໄດ້ ແລະ ມີປະຕູໃຫຍ່ 1 ປ່ອງ ເພື່ອສະດວກໃນການເຂົ້າ-ອອກ ແລະ ໃຫ້ມີປະຕູລະຫວ່າງຄອກຕໍ່ຄອກຈະສະດວກໃນ ການເກືອເປັດ ແລະ ອະນາໄມແຕ່ລະຄອກ.

- ວັດຖຸທີ່ໃຊ້ມຸງຫຼັງຄາຄວນເປັນຫຍ້າຄາ, ສັງກະສີ ຫຼື ກະເບື້ອງ ດີແທ້ແມ່ນກະເບື້ອງ ແລະ ຄວນເປັນຫຼັງຄາໜ້າຈົ່ວ 2 ຊັ້ນ.

- ຄອກຄວນມີການລະບາຍອາກາດ ແລະ ປ້ອງກັນແດດ, ລົມ, ຝົນ ຫຼື ປ້ອງກັນ ສັດຕູຂອງເປັດເຊັ່ນ: ໝາ, ແມວ, ງູ ແລະ ອື່ນໆ.

2.3 ຮູບແບບຂອງຄອກ

ຮູບແບບຂອງຄອກມີຫຼາຍຮູບແບບຄື:

1) ແບບໜ້າແຫງນ

ລັກສະນະຂອງຄອກແບບນີ້ ແມ່ນສ້າງງ່າຍ, ລາຄາຖືກ, ອາກາດຖ່າຍເທໄດ້ດີ ແຕ່ມີຂໍ້ເສຍຢູ່ບ່ອນວ່າ: ແສງແດດສາມາດສ່ອງເຂົ້າໄປພາຍໃນຄອກ ແລະ ຖ້າຝົນຕົກກໍຈະເຮັດ ໃຫ້ຝົນສາດເຂົ້າໄປໃນຄອກເຮັດໃຫ້ຄອກປຽກ.



ແບບທີ 1. ແບບໜ້າແຫງນ

2) ແບບໜ້າແຫງນກາຍ

ແບບນີ້ຈະເສຍຄ່າໃຊ້ຈ່າຍເພີ່ມຂຶ້ນແຕ່ກໍມີຂໍ້ດີເພີ່ມຫຼາຍຂຶ້ນຊຶ່ງເຮັດໃຫ້ມີຄວາມສາມາດ ປ້ອງກັນແດດ ແລະ ຝົນໄດ້ດີຂຶ້ນ.



ແບບທີ 2. ແບບໜ້າແຫງນກາຍ

3) ແບບໜ້າຈົວທຳມະດາ

ຄອກແບບນີ້ ຈະມີຄ່າໃຊ້ຈ່າຍສູງກວ່າ 2 ແບບທີ່ຜ່ານມາແຕ່ມີຂໍ້ດີຄື: ອາກາດພາຍໃນຄອກມີການລະບາຍໄດ້ດີ ແລະ ສາມາດປ້ອງກັນແດດ ແລະ ຝົນໄດ້ດີຂຶ້ນຕື່ມອີກ.



ແບບທີ 3. ແບບໜ້າຈົ່ວທຳມະດາ

4) ແບບໜ້າຈົວສອງຊັ້ນ

ເປັນແບບທີ່ມີຄວາມເໝາະສົມສຳລັບຄອກເປັດທີ່ຕ້ອງການລ້ຽງແບບເສດຖະກິດ. ເພາະຄອກແບບນີ້ ອາກາດພາຍໃນຄອກມີການຖ່າຍເທໄດ້ສະດວກດີທີ່ສຸດ ແລະ ສາມາດປ້ອງກັນ ແດດ ແລະ ຝົນດີກວ່າ 3 ແບບທີ່ຜ່ານມາ, ສາມາດອາໄສຢູ່ໄດ້ສະບາຍ ແລະ ເໝາະສົມທີ່ສຸດສຳ ລັບສາຍພັນເປັດທີ່ນິຍົມລ້ຽງ.



ແບບທີ 4. ແບບໜ້າຈົ່ວທຳມະດາ

## 2.3. ຄອກສຳລັບເປັດນ້ອຍ

ເນື່ອງຈາກວ່າ ເປັດນ້ອຍຕ້ອງການຄວາມອົບອຸ່ນ ສະນັ້ນ, ຄອກອະນຸບານສຳລັບເປັດນ້ອຍຕ້ອງໃຫ້ແໜ້ນໜາດີ, ສາມາດບັງແດດ ແລະ ບັງຝົນໄດ້, ຕ້ອງມີຜ້າກັ້ງປິດ-ເປີດ ເພື່ອຖ່າຍເທອາກາດ, ຖ້າ ອາກາດຮ້ອນອົບເອົ້າ ຫຼື ອາກາດໜາວໂພດ ກໍຈະເຮັດໃຫ້ເປັດນ້ອຍຕາຍໄດ້. ຄວນແບ່ງລູກເປັດຢູ່ຄອກນ້ອຍ ຫຼື ໃສ່ໃນກົງຍົກພື້ນກໍໄດ້ ຂະໜາດກົງ 110 x 130 cm ສາມາດບັນຈຸເປັດນ້ອຍໄດ້ຄອກລະ 60 ໂຕ. ແຫຼ່ງຄວາມຮ້ອນທີ່ໃຊ້ອະນຸບານລູກເປັດໃນຊ່ວງອາກາດໜາວ ແລະ ເວລາກາງຄືນແມ່ນ ໃຊ້ດອກໄຟປ້ອມຂະໜາດ 100 ວັດ

ພື້ນທີ່ສຳລັບເປັດນ້ອຍແມ່ນ 1 $m^2$ ສາມາດລ້ຽງເປັດນ້ອຍອາຍຸ 0-1 ອາທິດໄດ້ 30 ໂຕ ແລະ ອາຍຸ 1-2 ອາທິດ ໄດ້ 23 ໂຕ. ຕ້ອງໝັ່ນປ່ຽນວັດຖຸຮອງພື້ນ ອາທິດລະ 1 ເທື່ອ.

ຄວນມີນ້ຳໃຫ້ເປັດນ້ອຍໄດ້ກິນຕະຫຼອດເວລາ ໂດຍໃຊ້ຕຸກນ້ຳຂະໜາດ 8 ລິດ (1 ຕຸກ/ເປັດນ້ອຍ 10 ໂຕ), ຖາດອາຫານແບບແບນ ເສັ້ນຜ່າກາງປະມານ 40 cm (1 ຖາດ/ເປັດນ້ອຍ 10 ໂຕ) ເພື່ອໃຫ້ເປັດໄດ້ກິນໄດ້ງ່າຍ.



ຮູບ 2. ຄອກສຳລັບເປັດນ້ອຍ, ຮູບແບບຕຸກນ້ຳ ແລະ ຖັງໃສ່ອາຫານ

## 2.4. ຄອກສຳລັບເປັດລຸ້ນ

ສຳລັບເປັດລຸ້ນສາມາດປຸກເປັນຫຼັງໃຫຍ່, ຫຼັງຄາສູງ ແລະ ຂັ້ນເປັນຫຼາຍຫ້ອງ ໂດຍຂັ້ນຄອກໃຫ້ສູງປະມານ 80-100 cm, ດ້ານໜ້າຂອງ ຄອກຄວນມີເດີ່ນ ກວ້າງສຳລັບໃຫ້ເປັດໄດ້ຍ່າງຫຼິ້ນອອກກຳລັງກາຍ, ຕ້ອງມີນ້ຳ ແລະ ອາຫານ ເພື່ອໃຫ້ເປັດໄດ້ກິນຢ່າງພຽງພໍ. ຖ້າບໍ່ມີໜອງກໍຄວນມີຮາງນ້ຳທີ່ໃຫຍ່ເພື່ອໃຫ້ເປັດໄດ້ລອຍຫຼິ້ນໄດ້.



ຮູບ 3. ຮູບຄອກເປັດລຸ້ນ

## 2.5. ຄອກສຳລັບເປັດໄຂ່

ຄອກສຳລັບເປັດໄຂ່ ແມ່ນສ້າງຄືກັນກັບຄອກເປັດລຸ້ນ ແຕ່ຕ້ອງໄດ້ລຸດຈຳນວນເປັດ ລົງໃຫ້ໜ້ອຍກວ່າເປັດລຸ້ນ ແລະ ຄວນແບ່ງຄອກອອກເປັນ 2 ສ່ວນຄື:

- ສ່ວນທີ່ຢູ່ໃນຊາຍຄາ ເປັນເປັນບໍລິເວນນອນ ແລະ ໄຂ່, ຄວນຈັດຫາຮັງໄຂ່ໄວ້ໃຫ້ ເປັດໄຂ່, ຄວາມໜາແໜ້ນຂອງເປັດ ແມ່ນ 4-5 ໂຕ/$m^2$, ພື້ນຄອກຕ້ອງປູດ້ວຍຂີ້ເລື່ອຍ, ແກບ ຫຼື ເຟືອງ ໃຫ້ໜາປະມານ 4-5 cm, ພື້ນຄອກຕ້ອງໃຫ້ແຫ້ງຢູ່ສະເໝີ.
- ສ່ວນທີ່ຢູ່ນອກຊາຍຄາ ຈັດໃຫ້ເປັນບ່ອນຫຼິ້ນ ແລະ ຄວນມີຕຸກນ້ຳ ແລະ ຖັງອາຫານ, ສ່ວນນ້ຳແມ່ນສຳຄັນບໍ່ຄວນໃຫ້ຂາດ ເພາະວ່າເປັດຈະໄດ້ກິນຢູ່ຕະຫຼອດເວລາ, ພື້ນຄວນມີລັກສະນະຄ້ອຍຊັນເພື່ອບໍ່ໃຫ້ນ້ຳຂັງ.



ຮູບ 4. ຮູບບ່ອນໃຫ້ເປັດໄຂ່

| ອົງປະກອບການຮຽນ | ໜ້າ: 15 |
|---|---|
| **ຊື່ອົງປະກອບການຮຽນທີ 3: ການຄັດເລືອກເປັດ ແລະ ການລ້ຽງໄລຍະຕ່າງໆ** | |
| ຊື່ໂມດູນ: ການລ້ຽງເປັດ | ລະຫັດ |
| ຊື່ອາຊີບ: ລ້ຽງສັດ | |

**ຈຸດປະສົງ**

ພາຍຫຼັງສຳເລັດອົງປະກອບການຮຽນ ຜູ້ຮຽນສາມາດອະທິບາຍຫຼັກການ ຄັດເລືອກແນວພັນເປັດ ແລະ ດຳເນີນລ້ຽງເປັດໄດ້ຖືກຕ້ອງຕາມຫຼັກການລ້ຽງເປັດທີ່ກຳນົດໄວ້, ການລ້ຽງເປັດອາຍຸຕ່າງ, ການໃຫ້ນ້ຳ ແລະ ໃຫ້ອາຫານໄລຍະຕ່າງໆການທຳຄວາມສະອາດອຸປະກອນການລ້ຽງ ໄດ້ຖືກຕ້ອງ ແລະ ຜູ້ລ້ຽງສາມາດປະຕິບັດຕົວຈິງໄດ້.

**ພາກສະເໜີ**

ເນື້ອໃນບົດຮຽນນີ້ປະກອບດ້ວຍ 4 ຂໍ້ຄື: ການຄັດເລືອກລູກເປັດທີ່ຖືກຕ້ອງຕາມຫຼັກການ, ການລ້ຽງເປັດອາຍຸ 0-3 ອາທິດ, ການລ້ຽງເປັດອາຍຸ 3-8 ອາທິດ, ການລ້ຽງເປັດອາຍຸ 8-12 ອາທິດ.

### 3.1. ການຄັດເລືອກເປັດນ້ອຍ

ຖ້າຜູ້ລ້ຽງເປັດຢາກໄດ້ແນວພັນທີ່ດີຕ້ອງມີການຄັດເລືອກຄື:

- ຕ້ອງຮູ້ປະຫວັດຂອງເປັດທີ່ນຳມາລ້ຽງ.
- ສັງເກດເບິ່ງຮູບຮ່າງລັກສະນະການເຄື່ອນໄຫວຂອງເປັດ.
- ເບິ່ງຍາດຕິພີ່ນ້ອງໃນສາຍພັນດຽວກັນ.
- ສັງເກດເບິ່ງລັກສະນະສີຂອງຂົນເຊັ່ນ: ເປັດທີ່ດີຕ້ອງມີຂົນລຽບ, ເຫຼື້ອມ ແລະ ສີສັນສົດໃສ.

ເປັດນ້ອຍຕ້ອງຊື້ຈາກຟາມ ທີ່ມີຄວາມເຊື່ອຖືໄດ້ວ່າ: ບໍ່ເຄີຍມີພະຍາດລະບາດມາ ກ່ອນ, ພໍ່ແມ່ພັນຕ້ອງຜ່ານການສັກຢາປ້ອງກັນພະຍາດມາກ່ອນແລ້ວ ແລະ ເປັດນ້ອຍຕ້ອງມີຂົນແຫ້ງດີ, ຕາສົດໃສ, ຫ້າວຫັນ, ວ່ອງໄວ, ຂາທັງຄູ່ແຂງແຮງດີ, ບໍ່ພິການ, ເປັດນ້ອຍທີ່ເອົາມາລ້ຽງ ຕ້ອງເອົາມາຈາກຟາມດຽວກັນ; ຖ້າຈຳເປັນເອົາມາຈາກຫຼາຍຟາມຕ້ອງແຍກຂັງຕ່າງຫາກ ປະມານ 1 ອາທິດ ເພື່ອປ້ອງກັນການຕິດແປດຂອງພະຍາດ ຖ້າເຫັນວ່າບໍ່ມີອາການຜິດປົກກະຕິຈຶ່ງ ເອົາເຂົ້າລ້ຽງຮ່ວມກັນໄດ້.

## 3.2. ການລ້ຽງເປັດອາຍຸ 0-3 ອາທິດ

ການລ້ຽງເປັດນ້ອຍໃນຊ່ວງອາຍຸ 0-3 ອາທິດ ຕ້ອງຈື່ໄວ້ວ່າ: ກ່ອນຈະເອົາເປັດນ້ອຍເຂົ້າມາລ້ຽງຕ້ອງໄດ້ກະກຽມອຸປະກອນຕ່າງໆເຊັ່ນ: ຄອກລ້ຽງ, ຕຸກນໍ້າ, ຮາງອາຫານ, ອາຫານ ແລະ ຢາຕ່າງໆໃຫ້ພ້ອມໄວ້ລ່ວງໜ້າຄື:

1) ການອະນາໄມຄອກ ແລະ ອຸປະກອນ

ອຸປະກອນທຸກຢ່າງຕ້ອງເຮັດຄວາມສະອາດ, ຂ້າເຊື້ອແລ້ວ ເອົາໄປຕາກແດດ, ກະກຽມຄອກອົບ ແລະ ຫ້ອງສໍາລັບລູກເປັດກ່ອນ 2 ອາທິດ.

2) ການນໍາລູກເປັດເຂົ້າມາລ້ຽງ

ການນໍາເປັດນ້ອຍເຂົ້າມາລ້ຽງ ຕ້ອງໄດ້ສັ່ງຈອງເປັດນ້ອຍລ່ວງໜ້າກ່ອນຢ່າງໜ້ອຍ 1 ເດືອນ ຈາກຟາມຜະລິດລູກເປັດທີ່ມີຄຸນະພາບ ແລະ ມີຊື່ສຽງດີ. ໃນການຂົນສົ່ງເປັດນ້ອຍຕ້ອງຂົນເວລາອາກາດເຢັນຄື: ຕອນເຊົ້າ ຫຼື ຕອນແລງ ແລະ ບໍ່ຄວນບັນຈຸລູກເປັດໜາແໜ້ນຈົນ ເກີນໄປ.

3) ການປະຕິບັດກ່ອນ ແລະ ຫຼັງເປັດນ້ອຍມາຮອດຟາມ

- ກ່ອນເປັດນ້ອຍມາຮອດຟາມຕ້ອງເປີດດອກໄຟໃສ່ຄອກລ່ວງໜ້າ 1-2 ຊົ່ວໂມງ
- ຕຸກນໍ້າ ແລະ ຖັງໃສ່ອາຫານຕ້ອງກຽມພ້ອມ ແຕ່ເອົາໄວ້ທາງນອກຄອກເປັດກ່ອນ

ເມື່ອເປັດນ້ອຍມາຮອດຟາມແລ້ວຄວນປະຕິບັດດັ່ງນີ້:

- ນໍາເອົາລູກເປັດເຂົ້າຄອກອະນຸບານທັນທີເພື່ອໃຫ້ລູກເປັດໄດ້ພັກຜ່ອນ.
- ໃຫ້ຄວາມອົບອຸ່ນແກ່ລູກເປັດໂດຍການໃຊ້ເປົາອາຫານ ຫຼື ແກັດເຈ້ຍອ້ອມຄອກອະນຸບານ; ຖ້າອາກາດຮ້ອນຫຼາຍບໍ່ແອ້ມກໍໄດ້ ແຕ່ຖ້າອາກາດໜາວຕ້ອງໄດ້ແອ້ມ.
- ສັງເກດເປັດນ້ອຍໃນຄອກອົບ ຖ້າມີໂຕທີ່ອ່ອນແອຕ້ອງໄດ້ແຍກອອກຈາກຝູງ.
- ເມື່ອເປັດມາຮອດຄອກອະນຸບານໄດ້ 1 ຊົ່ວໂມງ ຈຶ່ງເລີ່ມເອົານໍ້າ ແລະ ອາຫານໃຫ້ເປັດກິນ.

**4)** ການໃຫ້ນໍ້າ ແລະ ອາຫານ

ການໃຫ້ອາຫານເປັນຕ້ອງໃຫ້ຕາມຄວາມຕ້ອງການແຕ່ລະຊ່ວງອາຍຸ ການໃຫ້ອາຫານເປັດນ້ອຍຄວນເປັນອາຫານທີ່ມີຂະໜາດນ້ອຍ ຈະຊ່ວຍໃຫ້ເປັດຍ່ອຍອາຫານທີ່ກິນເຂົ້າໄປໄດ້ງ່າຍ. ການໃຫ້ນໍ້າແມ່ນໃຫ້ນໍ້າທີ່ສະອາດເຕັມທີ່ເຊັ່ນ: ນໍ້າສ້າງ, ນໍ້າບາດານ ຫຼື ນໍ້າຝົນກໍໄດ້ ໂດຍໃສ່ກະຕຸກນໍ້າໃຫ້ເປັດກິນ, ຫຼີກເວັ້ນບໍ່ໃຫ້ລູກເປັດກິນນໍ້າເປື້ອນ ຫຼື ນໍ້າຂີ້ສີກ ເພາະມີພະຍາດປົນເປື້ອນຢູ່ ຈະເຮັດໃຫ້ເປັດນ້ອຍອ່ອນເພຍເຖິງແກ່ຄວາມຕາຍໄດ້. ອາຫານທີ່ໃຊ້ເກືອເປັດແມ່ນສາມາດໃຫ້ອາຫານສໍາເລັດຮູບໄດ້ ຫຼື ອາດຈະໃຊ້ອາຫານປະສົມໄດ້ ໂດຍອີງຕາມຄວາມຕ້ອງການທາດອາຫານຕາມຕາລະລາງຂ້າງລຸ່ມນີ້:

ຕາຕະລາງ 1 . ຄວາມຕ້ອງການທາດອາຫານຂອງເປັດຊີ້ນຕາມອາຍຸຂອງເປັດ

| ໂພຊະນາການອາຫານ | ອາຍຸເປັດ (ອາທິດ) | | | ເປັດພັນ |
|---|---|---|---|---|
| | 0-3 | 4-10 | 11-26 | 27-72 |
| ພະລັງງານໃຊ້ປະໂຫຍດ (kcal/kg) | 2,890 | 2,890 | 2,600 | 2,730 |
| ໂປຣຕີນ % | 18.7 | 15.4 | 13.2 | 18.7 |
| ແຄນຊຽມ % | 0.90 | 0.72 | 0.90 | 3.0 |
| ຟົດສະຟໍຣັດໃຊ້ໄດ້ % | 0.36 | 0.36 | 0.36 | 0.43 |
| ອາຈີນິນ % | 1.12 | 0.92 | 0.79 | 1.14 |
| ຮີດສະຕີດິນ % | 0.43 | 0.35 | 0.32 | 0.45 |
| ໄອໂຊລູຊີນ % | 0.66 | 0.54 | 0.57 | 0.80 |
| ລູຊີນ % | 1.31 | 1.08 | 1.09 | 1.08 |
| ໂລຊີນ % | 1.10 | 0.90 | 0.61 | 1.00 |
| ເມັດໄທໂອນິນ+ຊິດສະຕີນ % | 0.69 | 0.57 | 0.52 | 0.74 |
| ເຟນິນອາລານິນ+ໄທໂລຊີນ % | 1.44 | 1.19 | 1.04 | 1.47 |
| ທຣີໂອນິນ % | 0.69 | 0.57 | 0.49 | 0.70 |
| ທຣິປໂຕເຟນ % | 0.24 | 0.20 | 0.16 | 0.22 |
| ວາລີນ % | 0.80 | 0.68 | 0.61 | 0.86 |

### 5) ການໃຫ້ຄວາມອົບອຸ່ນ ແລະ ການປັບອຸນຫະພູມ

ໃນຊ່ວງໄລຍະທີ່ໃຫ້ຄວາມອົບອຸ່ນ 1-2 ອາທິດ ຕ້ອງສັງເກດ ແລະ ປັບເຄື່ອງໃຫ້ຄວາມຮ້ອນ ໃຫ້ອຸນຫະພູມໃນຄອກອົບອຸ່ນພໍດີຢູ່ສະເໝີ. ໂດຍການສັງເກດຕິດຕາມເປັດນ້ອຍດັ່ງນີ້:

- ຖ້າເຫັນເປັດນ້ອຍຢູ່ຈຸ້ມກັນໃກ້ດອກໄຟ ສະແດງວ່າໜາວໂພດຄວນປັບອຸນຫະພູມຂຶ້ນ ຫຼື ເພີ່ມດອກໄຟໃສ່ຕື່ມອີກ.
- ຖ້າເປັດນ້ອຍຫາກຢູ່ກະແຈກກະຈາຍກັນຕິດຝາ, ມີລັກສະນະອິດເມື່ອຍ ແລະ ອ້າປາກ ສະແດງວ່າຮ້ອນໂພດຄວນປັບອຸນຫະພູມໃຫ້ຫຼຸດລົງ.
- ຖ້າເຫັນເປັດນ້ອຍຍ່າງໄປມາປົກກະຕິທົ່ວບໍລິເວນຄອກ ສະແດງວ່າ ຄວາມອົບອຸ່ນ ພາຍໃນຄອກພໍດີ.
- ຖ້າເປັດນ້ອຍໄດ້ຮັບຄວາມອົບອຸ່ນດີ ຈະກິນອາຫານປົກກະຕິ ແລະ ຈະເລີນເຕີບໂຕດີ.




ຮູບ 5.  ວິທີສັງເກດການກະຈາຍໂຕຂອງເປັດໃນຄອກກົກ



ຮູບ 6. ຄອກ ແລະ ອຸປະກອນພາຍໃນຄອກ ໃນການອົບເປັດນ້ອຍອາຍຸ 1-2 ອາທິດ

ຕາຕະລາງ 1. ອູນຫະພູມທີ່ເໝາະສົມໃນການອົບລູກເປັດ

| ອາຍຸ (ວັນ) | ອາກາດຮ້ອນ | ອາກາດໜາວ |
|---|---|---|
| | °C | °C |
| 1 | 35 | 32 |
| 2-7 | 32-35 | 32-35 |
| 7-14 | 26-32 | 26-32 |
| 14-21 | ຢຸດອົບ | 23-26 |

### 3.3. ການລ້ຽງເປັດອາຍຸ 3-8 ອາທິດ

ລູກເປັດອາຍຸ 3-8 ອາທິດ ຈະມີການຈະເລີນເຕີບໂຕສູງ ດັ່ງນັ້ນ, ຊາວກະສິກອນ ຫຼື ເຈົ້າຂອງຟາມຄວນເອົາໃຈໃສ່ເລື່ອງອາຫານ, ການໃຫ້ນໍ້າ ແລະ ສ່ວນປະກອບຂອງອາຫານທີ່ໃຫ້ເປັດກິນ ແລະ ການຈັດການລ້ຽງດູເບິ່ງແຍງດີ, ໄລຍະນີ້ເປັດມີ ການຈະເລີນເຕີບໂຕສູງ. ດັ່ງນັ້ນ ອາຫານທີ່ໃຊ້ລ້ຽງໃນໄລຍະນີ້ຕ້ອງມີຄຸນະພາບ, ນອກນີ້ ຍັງຕ້ອງໄດ້ຄໍານຶງເຖິງປະລິມານທີ່ກິນຕໍ່ວັນ ໂດຍທົ່ວໄປແລ້ວຈະໃຫ້ອາຫານ 2 ຄາບຕໍ່ມື້ຄື: ຕອນ ເຊົ້າເວລາ 6-7 ໂມງ ແລະ ຕອນແລງ 4-5 ໂມງແລງ. ການໃຫ້ອາຫານແມ່ນເທໃສ່ຮາງອາຫານ ຊຶ່ງຫ່າງຈາກຮາງນໍ້າປະມານ 2-3 m. ເປັດຈະໄປກິນອາຫານ ແລະ ກິນນໍ້າເອງ. ການໃຫ້ອາຫານແຕ່ລະຄັ້ງແມ່ນຕ້ອງຄິດໄລ່ໃຫ້ພຽງພໍກັບຄວາມຕ້ອງການຂອງເປັດຄື 4% ຂອງນໍ້າໜັກໂຕ ບໍ່ຄວນໃຫ້ອາຫານຫຼາຍເກີນໄປ ເພາະຖ້າອາຫານເຫຼືອຫຼາຍຈະເຮັດໃຫ້ອາຫານບູດເນົ່າ ເມື່ອເປັດກິນເຂົ້າໄປຈະເຮັດໃຫ້ ເປັດເຈັບທ້ອງໄດ້.

### 3.4 ການລ້ຽງເປັດອາຍຸ 8-12 ອາທິດ

ເນື່ອງຈາກວ່າ ເປັດ ອາຍຸ 8-12 ອາທິດ ການຈະເລີນເຕີບໂຕຈະຫຼຸດລົງ, ກິນອາຫານຫຼາຍຂຶ້ນ ຫຼື ອາດເວົ້າໄດ້ວ່າ ປະສິດທິພາບຂອງອາຫານຫຼຸດລົງ, ເປັດກິນອາຫານຫຼາຍ ແຕ່ການຈະເລີນເຕີບໂຕໜ້ອຍ, ແຕ່ເມື່ອເປັດຂະໜາດນີ້ການຈະເລີນເຕີບໂຕຂອງຂົນແມ່ນສູງ ດັ່ງນັ້ນ, ຕ້ອງຮັກສາຂະໜາດ ແລະ ນໍ້າໜັກຂອງເປັດທີ່ໄດ້ມາຊ່ວງທໍາອິດ ແລະ ໃຫ້ມີນໍ້າໜັກເພີ່ມຂຶ້ນເລັກນ້ອຍຄື: ບໍ່ໃຫ້ອາຫານເຕັມທີ່ເພາະວ່າເປັດຊ່ວງອາຍຸ 8-12 ອາທິດ ເປັດກິນອາຫານຫຼາຍ. ດັ່ງນັ້ນ ຊາວກະສິກອນຈຶ່ງເອົາກາກເບຍ ຫຼື ເສດຜັກຕ່າງໆ, ຮໍາ, ເຂົ້າເປືອກ, ເຂົ້າປຽນປົນໃສ່ອາຫານສໍາເລັດຮູບໃນປະລິມານ 30-40% ເພື່ອ ເພີ່ມປະລິມານອາຫານໃຫ້ຫຼາຍຂຶ້ນ, ອາຫານໃຫ້ມີສ່ວນປະກອບຂອງເຍື່ອໄຍ ແຕ່ ບໍ່ໃຫ້ເກີນ 8%. ໃນບາງສະຖານທີ່ນິຍົມເພີ່ມສານອາຫານທີ່ມີຜົນຕໍ່ຄຸນນະພາບຂອງເປັດເຊັ່ນ: ກົດອາມິໂນ ທີ່ມີສານຊັນຟປະກອບເຊັ່ນ: ກົດເມັດໄທໂອນິນ ຫຼື ເຕີມ Iodinated casein zine ລົງໃນອາຫານ ເພື່ອເພີ່ມຜົນຜະລິດ ແລະ ຄຸນນະພາບຂອງຂົນ ເມື່ອເປັດອາຍຸໄດ້ 12 ອາທິດ ຈະສັງເກດເຫັນປາຍຂົນປີກທັງສອງຂ້າງເມື່ອເປັດຢືນປົກກະຕິ ເວລາຍ່າງປີກທັງສອງຂ້າງນັ້ນຈະແນບເຂົ້າລໍາໂຕ ເຊິ່ງເປັນໄລຍະທີ່ເໝາະສົມທີ່ໃຫ້ທັງຊີ້ນ ແລະ ຂົນ ຊຶ່ງມີປະລິມານ ແລະ ຄຸນນະພາບສູງ. ການໃຫ້ນໍ້າແມ່ນໃຫ້ແບບເຕັມທີ່ ອາດຈະໃສ່ຕຸກຢາງ ຫຼື ຊາມກໍໄດ້. ພາຊະນະທີ່ໃສ່ນໍ້າ ແລະ ອາຫານໃຫ້ເປັດຕ້ອງໄດ້ລ້າງທຸກມື້.

| ອົງປະກອບການຮຽນ | ໜ້າ: 21 |
|---|---|
| **ຊື່ອົງປະກອບການຮຽນທີ 4: ພະຍາດ ແລະ ການປ້ອງກັນພະຍາດ** | |
| ຊື່ໂມດູນ: ການລ້ຽງເປັດ | ລະຫັດ |
| ຊື່ອາຊີບ: ລ້ຽງສັດ | |

**ຈຸດປະສົງ**

ພາຍຫຼັງສຳເລັດອົງປະກອບການຮຽນນີ້ ຮຽນສາມາດອະທິບາຍລັກສະນະຂອງພະຍາດ ທີ່ມັກເກີດກັບເປັດໄດ້ ແລະ ປ້ອງກັນພະຍາດທີ່ເກີດຂຶ້ນກັບເປັດໄດ້ຖືກຕ້ອງຕາມຫຼັກການລ້ຽງເປັດ.

**ພາກສະເໜີ**

ເນື້ອໃນບົດຮຽນນີ້ປະກອບດ້ວຍ 2 ຂໍ້ຄື: ການຂ້າເຊື້ອພະຍາດພາຍໃນຄອກເປັດ, ພະຍາດທີ່ມັກເກີດຂຶ້ນກັບເປັດ.

### 4.1 ການຂ້າເຊື້ອພະຍາດພາຍໃນຄອກເປັດ

ການຂ້າເຊື້ອຄອກ ຫຼື ການອະນາໄມອຸປະກອນຕ່າງໆ ສຳລັບການລ້ຽງເປັດ ແມ່ນມີສ່ວນຫຼຸດຜ່ອນເຊື້ອພະຍາດຕິດຕໍ່ໂດຍມີຫຼັກການປະຕິບັດດັ່ງນີ້:

- ການລ້ຽງເປັດຊີ້ນ ເວລາຂາຍຄວນຂາຍຍົກເພື່ອສະດວກໃນການຂ້າເຊື້ອ ແລະ ອະນາໄມ.

- ຫຼັງຈາກຂາຍເປັດອອກໝົດແລ້ວ ຕ້ອງເອົາອຸປະກອນທັງໝົດອອກຈາກຄອກ ແລ້ວນຳໄປອະນາໄມ ແລະ ຂ້າເຊື້ອທຸກໆເທື່ອ.

- ໃຊ້ເຄື່ອງສີດນ້ຳທີ່ມີຄວາມດັນສູງ ສີດໃຫ້ທົ່ວທຸກໆບ່ອນຂອງຄອກ ປະໃຫ້ແຫ້ງ ແລ້ວຈຶ່ງສີດດ້ວຍເຊື້ອ GARI Germ 2000 ໃນປະລິມານ 7 cc/ນ້ຳ 1 ລິດ ຫຼື ຈະຫວ່ານປູນຂາວ ໃນອັດຕາ 20 kg/ 100 m$^2$.

- ການຂ້າເຊື້ອຕ້ອງເຮັດລ່ວງໜ້າ 2 ອາທິດ ກ່ອນນຳເປັດເຂົ້າມາລ້ຽງ ແລະ ຫຼັງຈາກຈຳໜ່າຍເປັດອອກໝົດແລ້ວຕ້ອງໄດ້ອະນາໄມຂ້າເຊື້ອຄອກໄວ້ທຸກໆຄັ້ງ.

### 4.2 ພະຍາດທີ່ມັກເກີດຂຶ້ນກັບເປັດ

ພະຍາດທີ່ມັກເກີດກັບເປັດມີດັ່ງນີ້:

### 1) ພະຍາດອະຫິວາເປັດ

ເປັນພະຍາດຕິດຕໍ່ຮ້າຍແຮງສຳລັບເປັດທຸກຊະນິດ ແລະ ຫ່ານ. ພະຍາດນີ້ເກີດຈາກ ເຊື້ອໄວຣັດ, ເປັນພະຍາດເກີດທຸກລະດູການ.

- ອາການ: ເຫງົາ, ບໍ່ກິນອາຫານ ແລະ ຕາຍເປັນຈຳນວນຫຼາຍ ເມື່ອຕາຍແລ້ວ ຈະເຫັນຮ່ອງຮອຍມີຈຸດເລືອດຕາມອະໄວຍະວະຕ່າງໆ ໂດຍສະເພາະຢູ່ລຳໄສ້.



ຮູບ 7. ຮູບເປັດເປັນພະຍາດອະຫິວາ

ການປ້ອງກັນ - ແລະ ປິ່ນປົວ

+ການປ້ອງກັນ: ສັກຢາປ້ອງກັນພະຍາດອະຫິວາເປັດໃຫ້ເປັດເປັດອາຍຸ 3 ອາທິດຂຶ້ນໄປໃຫ້ໄປໃຫ້ສັກອະຫິວາເປັດ 1 cc/ໂຕ, ສັກກ້າມຊີ້ກົກປີກ ຫຼື ກ້າມຂາ, ເປັດອາຍຸ 3-4 ເດືອນ ໃຫ້ສັກອີກ 1 cc/ໂຕ ກຸ້ມໄດ້ 6 ເດືອນ ສັກເປັນປະຈຳໃນທຸກໆ 6 ເດືອນ. ພ້ອມກັນນັ້ນເຮັດອະນາໄມອຸປະກອນການລ້ຽງ ແລະ ຄອກລ້ຽງເປັນປະຈຳ. ທຳລາຍຊາກສົບເປັດທີ່ຕາຍຍ້ອນພະຍາດນີ້ດ້ວຍວິທີການເຜົາໄຟ ຫຼື ຝັງໃຫ້ເລິກ ແລ້ວໂຮຍດ້ວຍປູນຂາວ.

+ ການປິ່ນປົວ: ພະຍາດນີ້ບໍ່ສາມາດປິ່ນປົວໄດ້ ເນື່ອງຈາກວ່າ ພະຍາດນີ້ເກີດ ຈາກເຊື້ອ ໄວຣັດ ບໍ່ມີຢາປະຕິຊີວະນະຊະນິດໃດສາມາດທຳລາຍເຊື້ອນີ້ໄດ້.

## 2. ພະຍາດລຳໄສ້ອັກເສບຂອງເປັດ

ພະຍາດລຳໄສ້ອັກເສບຂອງເປັດ ເປັນພະຍາດທີ່ເກີດຈາກເຊື້ອໄວຣັດ ຕະກຸນ Pesvindae ສາມາດຕິດຕໍ່ກັບເປັດທຸກລຸ້ນ.

-ອາການ: ມີການລະບາດຢ່າງໄວວາໃນຝູງເປັດນ້ອຍ, ເປັດມີອາການອ່ອນແອ, ອາຈົມ ແຫຼວ ແລະ ໃນທີ່ສຸດກໍຕາຍ.

- ການປ້ອງກັນ ແລະ ປິ່ນປົວ

+ ການປ້ອງກັນ: ແມ່ນສັກວັກຊີນປ້ອງກັນໃຫ້ພໍ່ແມ່ພັນ ເພື່ອສ້າງພູມຄຸ້ມກັນໃຫ້ແກ່ລູກ ແລະ ເນັ້ນໃສ່ການອະນາໄມອຸປະກອນການລ້ຽງ ແລະ ຄອກລ້ຽງເປັນປະຈຳ. ນອກນີ້ ຕ້ອງລະວັງປ້ອງກັນບໍ່ໃຫ້ນົກປ່າເຊັ່ນ: ນົກຂຸ້ມ ແລະ ນົກອື່ນໆບໍ່ໃຫ້ເຂົ້າມາພົວພັນກັບຄອກລ້ຽງເປັດ.

+ ການປິ່ນປົວ: ຍັງບໍ່ມີຢາຊະນິດໃດສາມາດປິ່ນປົວໄດ້.

### 2) ພະຍາດກະດູກອ່ອນຂອງເປັດ

ເປັນພະຍາດທີ່ເກີດຈາກການຂາດທາດວິຕາມິນ ແລະ ແຮ່ທາດ ເຊັ່ນ: ແຄນຊຽມ, ຟົດສະຟໍຣັດ ເປັນຕົ້ນ.

- ອາການ: ເປັດນ້ອຍຈະມີອາການອ່ອນແອ, ເປັນລ່ອຍ, ຍ່າງຂາຫ້ານ, ລຸກບໍ່ໄດ້ ໃນທີ່ສຸດກໍຕາຍຍ້ອນໝູ່ຢຽບ.

- ການປ້ອງກັນ ແລະ ປິ່ນປົວ

- ການປ້ອງກັນ: ແມ່ນສາມາດເຮັດໄດ້ຫຼາຍວິທີຄື: ຕື່ມນ້ຳມັນຕັບປາລົງໄປໃນອາຫານໃຫ້ກິນ, ໃຫ້ກິນເປືອກຫອຍປົ່ນ ຫຼື ກະດູກປົ່ນ, ໃຫ້ລູກເປັດຖືກແດດໃນຍາມເຊົ້າ ຫຼື ປ່ອຍອອກມານອນຜີງແດດ.
- ການປິ່ນປົວ: ໃຫ້ເປັດກິນຈຳພວກຢາ piperazine ເປັນຢາຂ້າແມ່ທ້ອງໃຫ້ເປັດກິນໂດຍ ການປະສົມນ້ຳໃນອັດຕາສ່ວນ 100 mg/1kg ນ້ຳໜັກເປັດ ແລະ ຄວນຈະໃຊ້ຢາຊ້ຳອີກ ທຸກໆ 3 ເດືອນ ຫຼື ຈັບເປັດອ້າປາກແລ້ວ ຢອດໃຫ້ກິນຍິ່ງເປັນການດີ.

- ການປ້ອງກັນພະຍາດເປັດ

ຕ້ອງໃຫ້ອາຫານທີ່ມີຄຸນນະພາບ ແລະ ໃຫ້ອາຫານຕາມຄວາມຕ້ອງການຕາມຊ່ວງອາຍຸຂອງເປັດ

## 4.3 ອຸປະກອນ ແລະ ເຄື່ອງມືໃນການສັກວັກຊີນ

- ກະຕິກນ້ຳກ້ອນ ຈຳນວນ 1 ອັນ ສຳລັບໃສ່ວັກຊີນ
- ສະແລ່ງຂະໜາດ 5 cc ຈຳນວນ 2 ອັນ ເອົາໄວ້ສັກວັກຊີນໃຫ້ເປັດ
- ນ້ຳກ້ອນ 2 kg ໄວ້ແຊ່ວັກຊີນ
- ຢາ piperazine ຈຳນວນ 2 ຊອງ

| ອົງປະກອບການຮຽນ | ໜ້າ: 25 |
|---|---|
| **ຊື່ອົງປະກອບການຮຽນທີ 5: ການຟັກໄຂ່ ແລະ ການອະນຸບານເປັດນ້ອຍ** | |
| ຊື່ໂມດູນ: ການລ້ຽງເປັດ | ລະຫັດ |
| ຊື່ອາຊີບ: ລ້ຽງສັດ | |

**ຈຸດປະສົງ**

ພາຍຫຼັງສໍາເລັດອົງປະກອບການຮຽນນີ້ ຜູ້ຮຽນສາມາດດໍາເນີນການຟັກໄຂ່ໄດ້ຢ່າງມີປະສິດທິພາບ, ສາມາດອະນຸບານເປັດນ້ອຍໃຫ້ລອດຕາຍໄດ້ຢ່າງຖືກຕ້ອງ, ຈໍາແນກໄດ້ພະຍາດທີ່ມັກເກີດກັບເປັດໄດ້ ແລະ ສາມາດປ້ອງກັນພະຍາດທີ່ເກີດຂຶ້ນກັບເປັດໄດ້.

**ພາກສະເໜີ**

ເນື້ອໃນບົດຮຽນນີ້ປະກອບດ້ວຍ 2 ຂໍ້ຄື: ການຂ້າເຊື້ອພະຍາດພາຍໃນຄອກເປັດ, ພະຍາດທີ່ມັກເກີດຂຶ້ນກັບເປັດ

## 5.1. ການຟັກໄຂ່

- ຮັງໄຂ່ຄວນວາງໄວ້ບ່ອນທີ່ປອດໄພຈາກການລົບກວນ ຈາກເປັດໂຕອື່ນ, ມົດເລັກນ້ອຍ ແລະ ຮອງດ້ວຍເຟືອງ, ໃບຫົວສີໄຄແຫ້ງ ຫຼື ຫຍ້າແຫ້ງອື່ນໆ.
- ໃຫ້ເປັດແມ່ຟັກໄຂ່ 15 ໜ່ວຍຕໍ່ຮັງ, ເປັດເທດໃຊ້ເວລາຟັກ 25 ວັນ, ເປັດກາບໃຊ້ເວລາຟັກ 25-30 ວັນ.
- ເປັດຄວນຫຼິ້ນນໍ້າໃນໄລຍະຟັກໄຂ່. ເພາະວ່າເປັດຕ້ອງການຄວາມຊຸ່ມໄປຟັກໄຂ່ ແລະ ເປືອກໄຂ່ເປັດມີຄວາມໜາກວ່າໄຂ່ໄກ່.
- ເມື່ອແມ່ເປັດຟັກໄຂ່ແຕກແລ້ວ ໃຫ້ນໍາເອົາວັດຖຸທີ່ຮອງໄຂ່ໄປຕາກແດດຢ່າງນ້ອຍ 3 ແດດ, ສ່ວນວັດສະດຸຮອງຮັງໄຂ່ນໍາໄປຈູດຖິ້ມ.
- ຖ້າລ້ຽງເປັນອາຊີບໃຫ້ໃຊ້ຕູ້ຟັກໄຂ່ແທນແມ່ເປັດ

## 5.2. ການອະນຸບານເປັດນ້ອຍ

- ພາຍຫຼັງເປັດນ້ອຍຟັກແຕກອອກມາ ໃຫ້ປະສົມຢາວິຕາມິນ (ໄວຕາເອບ) ແລະ ຄູໍເຕຕຣາຊິກລີນ ຫຼື ຊັນຟາມິດໃຫ້ເປັດນ້ອຍໄດ້ກິນຕະຫຼອດໄລຍະ 15 ວັນທໍາອິດ.

- ໃຊ້ອາຫານສຳເລັດຮູບສຳລັບເປັດ ອາຍຸ 21-30 ວັນ ໃຫ້ກິນເຕັມທີ່ ຖ້າບໍ່ມີອາຫານສຳເລັດຮູບ ໃຫ້ໃຊ້ຂີ້ກະເດືອນ, ປາແກ້ວ, ຫອຍ ໄປຊອຍປະສົມຮຳ ແລະ ເຂົ້າປຽນ ປະລິມານທີ່ເກືອແມ່ນປະມານ 20 ກຣາມຕໍ່ໂຕຕໍ່ມື້ ຖ້າເກັບໄວ້ດົນໃຫ້ໜຶ້ງ ຫຼື ຕາກແດດໃຫ້ແຫ້ງດີ, ເກັບໄວ້ໃນບ່ອນທີ່ແຫ້ງ, ສມາດເກັບໄດ້ໄວ້ເຖິງ 6 ເດືອນ, ສ່ວນປູ້ຫອຍ ແມ່ນທຸບໃຫ້ມຸ່ນໆກ່ອນອັດຕາສ່ວນ 1 ບ່ວງກາເຟຕໍ່ອາຫານ 3 ກິໂລກຼາມ ແລະ ໃຫ້ກິນຈົນເປັດອາຍຸໄດ້ 3 ເດືອນ



ຮູບ 8. ການອະນຸບານເປັດນ້ອຍ

**ຂໍ້ຄວນລະວັງ:** ໃຫ້ເປັດນ້ອຍໄດ້ຮັບຄວາມອົບອຸ່ນຢ່າງພຽງພໍໃນໄລຍະ 10-15 ວັນ, ຫ້າມເປັດນ້ອຍຫຼິ້ນນ້ຳຫຼາຍຈະເຮັດໃຫ້ເປັດນ້ອຍຫຼິ້ນນ້ຳ ຈະເຮັດໃຫ້ເປັດນ້ອຍປອດບວມໄດ້.

### 5.3. ອຸປະກອນ ແລະ ເຄື່ອງມື ທີ່ໃຊ້ໃນການຟັກໄຂ່

- ຮັງໄຂ່ເຮັດດ້ວຍໄມ້ໄຜ່ ຫຼື ກະຕ່າຢາງ ຂະໜາດ 40-50 cm (ຈຳນວນ 1 ຮັງ ຕໍ່ເປັດ ແມ່ 1 ໂຕ)
- ເຟືອງແຫ້ງ ຫຼື ຫຍ້າແຫ້ງ ຫຼື ໃບຫົວສີໄຄ ສຳລັບຮອງຮັງໄຂ່ ຮອງໃຫ້ໜາໜາປະມານ 5 cm

### 5.4. ອຸປະກອນສຳລັບໃຫ້ອາຫານ ແລະ ນ້ຳເປັດ

- ຮາງອາຫານ ຈຳນວນ 1 ຮາງຕໍ່ເປັດນ້ອຍ 10 ໂຕ, ສຳລັບເປັນໃຫຍ່ແມ່ນໃຫ້ໃຊ້ຊາມ ຫຼື ຖັງອາຫານແບບແຂວນ 1 ຖັງຕໍ່ເປັດໃຫຍ່ 5-8 ໂຕ.
- ຖຸກນ້ຳ ຂະໜາດ 8 ລິດ ຈຳນວນ 1 ຮາງ ຕໍ່ເປັດນ້ອຍ 10 ໂຕ ແລະ ເປັດໃຫຍ່ 5 ໂຕ.

| ອົງປະກອບການຮຽນ | ໜ້າ: 27 |
|---|---|
| **ຊື່ອົງປະກອບການຮຽນທີ 6: ການນຳໃຊ້ນ້ຳໝັກຊີວະພາບ ແລະ ວິທີປະສົມອາຫານໃຫ້ເປັດ** | |
| ຊື່ໂມດູນ: ການລ້ຽງເປັດ | ລະຫັດ |
| ຊື່ອາຊີບ: ລ້ຽງສັດ | |

**ຈຸດປະສົງ**

ພາຍຫຼັງສຳເລັດອົງປະກອບການຮຽນນີ້ ດຳເນີນການຜະລິດນ້ຳໝັກຊີວະພາບເອງໄດ້ ແລະ ສາມາດປະສົມອາຫານເອງໄດ້ຢ່າງຖືກຕ້ອງຕາມຄູ່ມື ແລະ ຮູ້ຈັກວິທີຄິດໄລ່ຕົ້ນທຶນ ແລະ ກຳໄລທີ່ໄດ້ຮັບ.

**ພາກສະເໜີ**

ເນື້ອໃນບົດຮຽນນີ້ປະກອບດ້ວຍ 2 ຂໍ້ຄື: ການນຳໃຊ້ນ້ຳໝັກຊີວະພາບຈາກສະໝູນໄພຊ່ວຍໃຫ້ເປັດແຂງແຮງ, ນ້ຳກັນຊີວະພາບສາມາດຂັບໄລ່ແມງໄມ້ ແລະ ດັບກິ່ນໄດ້, ການໄລ່ລຽງເສດຖະກິດການລ້ຽງເປັດ.

## 6.1. ການນຳໃຊ້ນ້ຳໝັກຊີວະພາບຈາກສະໝູນໄພຊ່ວຍໃຫ້ເປັດແຂງແຮງ

ວິທີເຮັດນ້ຳໝັກຊີວະພາບແມ່ນເອົາເຮັດຕາມຂັ້ນຕອນດັ່ງລຸ່ມນີ້:

1. ພຶດຜັກຊະນິດຕ່າງໆ ຫຼື ສະໝຸນໄພເຊັ່ນ: ຜັກຂະ, ເຄືອເຂົາຮໍ, ໃບຂີ້ເຫຼັກ ແລະ ໃບກະຖິນ ແລ້ວຕຳໃຫ້ມຸ່ນ
2. ນຳຜັກ ຫຼື ສະໝຸນໄພຕ່າງມາ 3 ກິໂລ ປະສົມກັບນ້ຳຕານແດງ ຫຼື ກາກນ້ຳຕານ 1 ກິໂລ ແລ້ວໝັກໄວໃນຖັງທີ່ມີຝາປິດໃຫ້ແຈບຢ່າງໜ້ອຍ 7 ວັນ ແລ້ວຕອງເອົາແຕ່ນ້ຳຫົວເຊື້ອ.
3. ການຂະຫຍາຍຫົວເຊື້ອ ເອົາກາກນ້ຳຕານ ຫຼື ນ້ຳອ້ອຍ 1 ລິດ ປະສົມກັບນ້ຳ 10 ລິດ ແລະ ນ້ຳຫົວເຊື້ອດັ່ງກ່າວທີ່ກັນຕອງມານັ້ນ 1 ລິດ ປະສົມເຂົ້າກັນໃສ່ຖັງປິດຝາໄວ້ໃຫ້ແຈບດີ ແລະ ປະໄວຢ່າງນ້ອຍ 3 ວັນ ຈະໄດ້ນ້ຳໝັກຊີວະພາບ.
4. ເອົານ້ຳໝັກຊີວະພາບດັ່ງກ່າວ 1 ບ່ວງແກງປະສົມກັບນ້ຳ 1 ລິດໃຫ້ເປັດກິນຫຼື ປົນອາຫານໃຫ້ກິນທຸກໆມື້, ຈະຊ່ວຍໃຫ້ເປັດກິນອາຫານດີ, ແຂງແຮງ, ໃຫຍ່ໄວ ແລະ ປ້ອງກັນພະຍາດໄດ້ອີກດ້ວຍ.

**ອຸປະກອນຮັບໃຊ້ມີຄື:** ຄົກ, ສາກ, ມີດ, ຂຽງ, ຈອງສຳລັບຄົນນ້ຳໝັກ, ຖັງຢາງທີ່ມີຝາປິດ ຂະໜາດ 5 ລິດຈຳນວນ 1 ຖັງ ແລະ ຖັງໜາດ 15 ລິດ ຈຳນວນ 1 ຖັງ, ກະບອກສີດ 1 ອັນ.

## 6.2. ການນຳໃຊ້ນ້ຳໝັກຊີວະພາບຂັບໄລ່ແມງໄມ້ ແລະ ດັບກິ່ນຄອກເປັດ

- ນ້ຳໝັກຊີວະພາບຕາມສູດຂ້າງເທິງສີດ ຫຼື ຫົດພື້ນຄອກທີ່ປູດ້ວຍແກບອາທິດລະຄັ້ງ ເພື່ອຂ້າເຊື້ອ ແລະ ດັບກິ່ນ.
- ຂັບໄລ່ແມງໄມ້ທີ່ກິນພືດຜັກໄດ້.
- ແກບຢູ່ພື້ນຄອກສາມາດເອົາໄປເຮັດຝຸ່ນບົ່ມ ຫຼື ໃສ່ພືນລະປູກຊະນິດຕ່າງໆໄດ້.
- ສິ່ງທີ່ຄວນເອົາໃຈໃສ່: ໃນປີໜຶ່ງ ບໍ່ຄວນລ້ຽງເປັດໃສ່ຄອກດັ່ງກ່າວ ຢ່າງນ້ອຍ 3-4 ອາທິດ ເພື່ອທຳການຂ້າເຊື້ອ.

## 6.3 ວິທີປະສົມອາຫານສຳລັບເປັດໃຫຍ່

ຕາຕະລາງ. ສູດອາຫານພື້ນບ້ານປະສົມໃຫ້ເປັດ

| ວັດຖຸດິບ | ສູດທີ 1 | ສູດທີ 2 | ສູດທີ 3 |
|---|---|---|---|
| ເສດຜັກກາດຂາວ | 22.5 | 33.8 | 45 |
| ກາກເບຍ | 22.5 | 11.2 | 0 |
| ຮຳ | 28 | 39 | 44 |
| ເຂົ້າປຽນ | 21 | 10 | 5 |
| ແກບເຜົາ | 5 | 5 | 5 |
| ເກືອ | 0.5 | 0.5 | 0.5 |
| ພຣີມິສ | 0.5 | 0.5 | 0.5 |
| ລວມ, g | 100 | 100 | 100 |
| % ໂປຼຕີນ | 15.3 | 15.1 | 15.0 |

ໝາຍເຫດ: ສູດອາຫານຂ້າງເທິງແມ່ນແນະນຳໃຫ້ໃຊ້ຕາມເງື່ອນໄຂທີ່ມີ. ຖ້າບໍ່ມີລາຍການອາຫານຕາມຂ້າງເທິງຜູ້ລ້ຽງສາມາດໃຊ້ອາຫານສຳເລັດຮູບເກືອໄດ້ 100% ຫຼື ນຳໃຊ້ອາຫານສານສຳເລັດຮູບ 60% ປະສົມກັບຮຳ 40% (ສຳລັບເປັນໃຫຍ່), ສຳລັບເປັດນ້ອຍອາຍຸ 1-30 ວັນ ແມ່ນແນະນຳໃຫ້ໃຊ້ອາຫານສຳເລັດຮູບ 100%.

## 6.4 ການໄລ່ລຽງເສດຖະກິດການລ້ຽງເປັດ

- ລ້ຽງເປັດ 100 ໂຕ ລ້ຽງຮອດ 8 ອາທິດ ອັດຕາການຕາຍ 5% (ເປັດນ້ອຍຕາຍ 5ໂຕ ຍັງເຫຼືອ 95 ໂຕ
- ລາຄາ ເປັດນ້ອຍ ອາຍຸ 1 ອາທິດແມ່ນ 8,000 ກີບ/ໂຕ
- ຮຳອ່ອນ 300 ກິໂລ x 3,000 ກີບ= 1,800,000 ກີບ

- ຫົວອາຫານໝູນ້ອຍ 8 ເປົາ x 30 ກິໂລ = 240 ກິໂລ,
  ຈຳນວນ 8 ເປົາ x 195,000 =1,560,000 ກີບ
- ນ້ຳໜັກເປັດສະເລ່ຍ 1.50 ກິໂລ
- ເປັດຈຳນວນ 95 ໂຕ x 1.50 ກິໂລ = 142.5 ກິໂລ
- ລາຄາເປັດ 30,000 ກີບ x 142.5 ກິໂລ = 4,275,000 ກີບ
- ຫົວອາຫານ 1.6 ກິໂລ + ຮຳອ່ອນ 2.2 ກິໂລ ໄດ້ນ້ຳໜັກເປັດ 1 ກິໂລ

| ລ/ດ | ລາຍການ | ຫົວໜ່ວຍ | ຈຳນວນ | ລາຄາ | ລວມ |
|---|---|---|---|---|---|
| 1 | ເປັດນ້ອຍ | ໂຕ | 95 | 8,000 | 760,000 |
| 2 | ອາຫານສຳເລັດຮູບ | ເປົາ | 8 | 195,000 | 1,560,000 |
| 3 | ວິຕາມິນ | ຊອງ | 2 | 14,000 | 28,000 |
| 4 | ຄ່າໄຟຟ້າ | ເດືອນ | 2 | 15,000 | 30,000 |
| 5 | ແຮງງານສະເລ່ຍ | ວັນ | 15 | 30,000 | 450,000 |
| | ລວມ | | | | 2,828,000 |

ກຳໄລຈາກການຂາຍເປັດ= 3,562,500 – 2,828,000 = 1,452,000 ກີບ

# ເອກະສານອ້າງອີງ


ສີລິພັນ ໂມລສໂກນ. (1998) . ຄູ່ມືການລ້ຽງເປັດເທບ, ສະຖາບັນການຄົ້ນຄ້ວາວິໄຈ ແລະ ພັດທະນາສັດປີກແຫ່ງຊາດ. ໜ. 3. (ພາສາໄທ).

ສີດາ ແສງງາມ. (2002). ຫຼັກການລ້ຽງສັດທົ່ວໄປ. ພາກວິຊາລ້ຽງສັດ ແລະ ການປະມົງ, ຄະນະກະ ເສດສາດ, ມະຫາວິທະຍາໄລແຫ່ງຊາດ. ໜ. 41-42.

ສະໝານ ດວງມາລາ, ມາລາວັນ ຈິດຕະວົງ ແລະ ຟອງສະມຸດ ສຸທຳມະວົງ. (2016). ຜົນຂອງການທົດແທນອາຫານສຳເລັດຮູບດ້ວຍເສດຜັກກາດຂາວຕໍ່ການຈະເລີນເຕີບໂຕຂອງເປັດເທບ. ວິທະຍານິພົນລະດັບປະລິນຍາໂທ. ຄະນະກະເສດສາດ. ມະຫາວິທະຍາໄລແຫ່ງຊາດ. ໜ 10-25.

ບົວລະສັກດິ ທັດສະດິນ. (2006). ຄູ່ມືການລ້ຽງ ແລະ ຂະຫຍາຍພັນເປັດໄຂ່ ແລະ ເປັດຊີ້ນ, ສູນສົ່ງເສີມ ແລະ ຝຶກອົບອົບການກະເສດແຫ່ງຊາດ. ໜ. 21.

Betagro, 2021. D

ປັນຍາ ສຸລຳສຸທອນ. (2001). ການລ້ຽງເປັດຊີ້ນ, ໂຄງການໜັງສືກະເສດຊຸມຊົນ, ສະຖາບັນເທັກໂນໂລຊີ. ພະຈອມເກົ້າຄຸນທະຫານລາດກະບັງ, ກຸງເທບມະຫານະຄອນ. ໜ. 40-45. (ພາສາໄທ).

ໄພລັດ ເລື່ອນໄທສົງ. (2000). ຄູ່ມື້ການລ້ຽງເປັດເທບ ແລະ ການລ້ຽງໄກ່ໃນຊົນນະບົດ, ສະຖາບັນເທັກໂນໂລຢີລາດຊະມົງຄົນ, ວິທະຍາເຂດກາລະສິນ. ໜ. 9-12. (ພາສາໄທ).

ອາຣ່າມ ຄຸ້ມສັບ. (2000). ກະເສດທຳມະຊາດແບບໄທ, ບໍລິສັດ ກິດຈະການສຶກສາເທດລົ້ງຈຳກັດ. ໜ. 10-11. (ພາສາໄທ)

ອຳພອນ ທຳມະບຸດ. (1998). ຄູ່ມືການລ້ຽງເປັດເທບພັນບາບາລີ. ສະຖາບັນວິໄຈ ແລະ ພັດທະນາສັດປີກ ແຫ່ງຊາດ. ໜ້າ. 5. (ພາສາໄທ).

ອໍລະວັນ ຊົນຣາສີ, 2004. ເທັກໂນໂລຢີການຜະລິດສັດປີກ. ໜ. 1-40. (ພາສາໄທ)

NRC, 1998. Nutrient. Nutrient Requirements of Poultry. Ninth Revised Edition. National Academy Press Washington.

ສະໜັບສະໜູນໂດຍ:

With financial support from the Russian Federation

ພິມທີ່: ໂຮງພິມດີບຸກ

ພິມຄັ້ງທີ: 1

ພິມເພື່ອ: ນຳໃຊ້ເຂົ້າໃນການຝຶກອົບຮົມ